ທະນາຄານແຫ່ງ ສປປ ລາວ

ກົມບັນຊີ-ການເງິນ

# ປື້ມຄູ່ມືການບັນທຶກບັນຊີ
# ສະຖາບັນການເງິນ

ປີ 2016

# ຄຳນຳ

ປຶ້ມຄູ່ມືການບັນທຶກບັນຊີຂອງສະຖາບັນການເງິນສະບັບນີ້ ສ້າງຂຶ້ນໂດຍຜັນຂະຫຍາຍຈາກປຶ້ມຄູ່ມືການນຳໃຊ້ຜັງບັນຊີຂອງສະຖາບັນການເງິນ ເພື່ອເຮັດໃຫ້ເຂົ້າໃຈໃນການຈັດຕັ້ງປະຕິບັດການບັນທຶກບັນຊີທຸລະກຳປະເພດຕ່າງໆ ຂອງສະຖາບັນການເງິນທີ່ມີການເຄື່ອນໄຫວ ໂດຍສະເພາະແມ່ນການຈັດຕັ້ງປະຕິບັດຕາມລະບົບບັນຊີໃໝ່ ໃຫ້ມີຄວາມຖືກຕ້ອງ, ສອດຄ່ອງກັບລະບຽບຫຼັກການບັນຊີ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດໄວ້.

ການສ້າງປຶ້ມຄູ່ມືການບັນທຶກບັນຊີສະບັບນີ້ ແມ່ນເພື່ອຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການ ແລະ ເພື່ອເປັນບ່ອນອີງໃຫ້ແກ່ສະຖາບັນການເງິນທີ່ເຄື່ອນໄຫວຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ. ເນື້ອໃນຂອງປຶ້ມຄູ່ມືການບັນທຶກບັນຊີສະບັບນີ້ ໄດ້ເວົ້າເຖິງທຸລະກຳປະເພດຕ່າງໆ ຂອງສະຖາບັນການເງິນ ໂດຍສະເພາະດ້ານລະບຽບຫຼັກການ ແລະ ວິທີການບັນທຶກບັນຊີທຸລະກຳເຫຼົ່ານັ້ນ ຊຶ່ງມີພາກທິດສະດີ ແລະ ຕົວຢ່າງການບັນທຶກບັນຊີແຕ່ລະທຸລະກຳເຊັ່ນ: ການບັນທຶກບັນຊີກ່ຽວກັບຊັບສົມບັດຄົງທີ່, ການໃຫ້ສິນເຊື່ອແກ່ລູກຄ້າ, ເງິນຝາກຂອງລູກຄ້າ, ທຶນຈົດທະບຽນແລະສ່ວນເພີ່ມທີ່ຕິດພັນກັບທຶນ ແລະ ການປິດບັນຊີແລະການແບ່ງປັນຜົນໄດ້ຮັບ.

ຄູ່ມືການນຳໃຊ້ຜັງບັນຊີຂອງສະຖາບັນການເງິນສະບັບນີ້ ຍ່ອມປັດສະຈາກບໍ່ໄດ້ຂໍ້ຂາດຕົກບົກຜ່ອງ ຈຶ່ງຮຽກຮ້ອງມາຍັງບັນດາພາກສ່ວນກ່ຽວຂ້ອງຊ່ວຍຕຳນິຕິຊົມ ແລະ ປະກອບຄຳເຫັນມາຍັງກົມບັນຊີ-ການເງິນ ທະນາຄານແຫ່ງ ສປປ ລາວ ເພື່ອເປັນຂໍ້ມູນພິຈາລະນາປັບປຸງໃຫ້ດີຂຶ້ນໃນແຕ່ລະໄລຍະ.

ນະຄອນຫຼວງວຽງຈັນ, ວັນທີ: 10 MAR 2016

**ຫົວໜ້າກົມບັນຊີ-ການເງິນ**

ທະນາຄານ ແຫ່ງ ສປປ ລາວ
ກົມບັນຊີ-ການເງິນ

ນ. ຂັນແກ້ວ ຫຼ້າມະນີເງົາ